ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ
ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ເລກທີ: 4 7 8 /ກສປ

ນະຄອນຫລວງວຽງຈັນ, ວັນທີ: 2 3 APR 2026

# ແຈ້ງການແນະນຳ

**ຮຽນ:** ທ່ານຫົວໜ້າຫ້ອງການ, ກົມ, ກອງ, ສູນ, ສະຖາບັນ ພາຍໃນກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ບັນດາຂະແໜງການ ທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ;

**ເລື່ອງ:** ຂະບວນການ ແລະ ຂັ້ນຕອນ ກ່ຽວກັບການເປີດຮັບບົດສະເໜີ ໂຄງການທຶນພາຍໃນ ປະຈຳປີ 2026 ຂອງ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 1259/ກສ ລົງວັນທີ 12 ກັນຍາ 2025;
- ອີງຕາມ ແຈ້ງການປິດຮັບບົດສະເໜີໂຄງການທຶນພາຍໃນ ປີ 2025 ຂອງ ຫ້ອງການກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້ ສະບັບເລກທີ 470/ກສປ, ລົງວັນທີ 15 ຕຸລາ 2026.
- ອີງຕາມທິດທາງແຜນການເຄື່ອນໄຫວ ວຽກງານ 5 ປີ (2026-2030) ຂອງຫ້ອງການກອງທຶນປົກປັກຮັກສາ ສິ່ງແວດລ້ອມ ແລະ ປ່າໄມ້.

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (ກສປ) ຂໍຖືເປັນກຽດແຈ້ງມາຍັງທຸກພາກສ່ວນ ຊາບວ່າ: ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ໄດ້ເປີດຮັບບົດສະເໜີໂຄງການ ທີ່ຂໍນຳໃຊ້ທຶນພາຍໃນ ເລີ່ມແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນມາ ແລະ ຈະປິດຮັບບົດສະເໜີ ໂຄງການ ໃນທ້າຍເດືອນ ກັນຍາ 2026. ສະນັ້ນ, ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນການຂໍນຳໃຊ້ທຶນ ຈາກຫ້ອງການກອງທຶນ ໂດຍສະເພາະການນຳສົ່ງຂໍອະນຸມັດ ແລະ ການດຳເນີນຂະບວນການດ້ານເອກະສານຕ່າງໆ ແຈ້ງປະຕິບັດດັ່ງນີ້: ຫ້ອງການກອງທຶນ ເປີດຮັບບົດສະເໜີ ໂຄງການ ປີ 2026 ເລີ່ມແຕ່ວັນທີ **1 ມັງກອນ 2026** ແລະ ຈະປິດຮັບບົດສະເໜີໂຄງການ ວັນທີ **30 ກັນຍາ 2026**;

1. ພາກສ່ວນຕ່າງໆ ທີ່ຂໍທຶນ ຕ້ອງໄດ້ປະກອບເອກະສານ ຕາມແບບຟອມບົດສະເໜີໂຄງການຕາມລະບຽບການ ຂອງຫ້ອງການກອງທຶນກຳນົດໄວ້ ຊຶ່ງການປະກອບເອກະສານ ບົດສະເໜີໂຄງການ ດັ່ງນີ້:
    1) ໜັງສືສະເໜີ;
    2) ໜັງສືຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
    3) ບົດສະເໜີໂຄງການ;
    4) ແຜນງົບປະມານລວມຂອງໂຄງການ ຕາມປະເພດລາຍຈ່າຍ ແລະ ແຜນງົບປະມານຕາມອົງປະກອບ;
    5) ກອບຜົນໄດ້ຮັບ ຕົວຊີ້ວັດໂຄງການ;
    6) ແຜນງົບປະມານລະອຽດແຍກເປັນປີ;
    7) ແຜນຈັດຊື້ ແລະ ຈັດຈ້າງ;
    8) ເອກະສານອື່ນທີ່ກ່ຽວຂ້ອງ.

2. ທຸກບົດສະເໜີໂຄງການຕ້ອງໄດ້ຜ່ານ ກົມວິຊາການທີ່ກ່ຽວຂ້ອງ ເພື່ອຢັ້ງຢືນຄວາມສອດຄ່ອງກັບພາລະບົດບາດ, ແຜນຍຸດທະສາດຂອງຂະແໜງການ, ກົມກ່ຽວຂ້ອງ ແລະ ກະຊວງ ພ້ອມທັງຮັບປະກັນໂຄງການບໍ່ຊ້ຳຊ້ອນ;
3. ທຸກບົດສະໂຄງການທີ່ໄດ້ຮັບການຢັ້ງຢືນຈາກກົມ/ຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ສົ່ງຫາກົມແຜນການ ແລະ ການຮ່ວມມື ກະຊວງ ເພື່ອຊາບ ແລະ ນຳສົ່ງຕໍ່ ຫາຫ້ອງການກອງທຶນ;
4. ບົດສະເໜີໂຄງການທີ່ປະກອບເອກະສານມາບໍ່ຄົບຖ້ວນ ແມ່ນຈະຖືກຕີກັບ ເພື່ອໄປປະກອບເອກະສານຄືນໃໝ່ ແລະ ສົ່ງກັບຄືນໃຫ້ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້;
5. ກອງທຶນຈະຄົ້ນຄ້ວາບົດສະເໜີໂຄງການ 3ຄັ້ງ/ປີ (ເດືອນ3, ເດືອນ6 ແລະ ເດືອນ9) ໂດຍຜ່ານຄະນະວິຊາການປະເມີນຜົນບົດສະເໜີໂຄງການ ແລະ ນຳສະເໜີປະທານສະພາບໍລິຫານ ອະນຸມັດ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການກອງທຶນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້

ພັດນະຄອນ ຄັນທະມີໄຊ


ຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນ:

- ທ່ານ ພົກສະໄຫວ ວົງສາລີ ຫົວໜ້າຂະແໜງແຜນການ-ຮ່ວມມື ແລະ ລະດົມທຶນ 020 5565 8439
- ນາງ ພູສະໄໝ ວົງສະໝອນ ຮອງຫົວໜ້າຂະແໜງແຜນການ-ຮ່ວມມື ແລະ ລະດົມທຶນ 020 9504 6769
- ນາງ ນ້ອຍ ຫຼ້າບຸນທາ ວິຊາການ 020 7796 6721